ມາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ

ເລກທີ.883./ຂບຊ
ບໍລິຄຳໄຊ, ວັນທີ.12 ກັນຍາ 2024

# ຂໍ້ຕົກລົງ
## ວ່າດ້ວຍ ນະໂຍບາຍ ແລະ ລາຄາຫົວໜ່ວຍ
## ທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກ ໂຄງການກໍ່ສ້າງ
## ຂົວໃໝ່ແທນຂົວເກົ່າ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊ່ຽນເລກທີ 15 (AH15)

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍ ການຈັດສັນພຸມລຳເນົາ ແລະ ອາຊີບ ສະບັບເລກທີ 45/ສພຊ, ລົງວັນທີ 18 ມິຖຸນາ 2018;
- ອີງຕາມ ມະຕິຂອງກອງປະຊຸມຄະນະປະຈຳສະພາປະຊາຊົນ ສະບັບເລກທີ 124/ຄປຈ.ສພຂ, ລົງວັນທີ 5 ທັນວາ 2024.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ເງື່ອນໄຂ ແລະ ມາດຕະການ ກ່ຽວກັບນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງຂົວໃໝ່ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊ່ຽນເລກທີ 15 (AH15), ເພື່ອໃຫ້ເໝາະສົມກັບກົດໝາຍ ແລະ ລະບຽບການ ແນ່ໃສ່ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ຮັບປະກັນຄວາມສະເໝີພາບ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້, ປະກອບສ່ວນເຂົ້າໃນການສ້າງມາພັດທະນາແຂວງບໍລິຄຳໄຊ.

**ມາດຕາ 2 ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນ**

ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງ[illegible] ຂົວເກົ່າ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊ່ຽນ ເລກທີ 15 (AH15), ແມ່ນໄດ້ກຳ[illegible] ນິດເງື່ອນໄຂ ແລະ ລາຄາຫົວໜ່ວຍທົດແທນ[illegible] ດິນ, ຕົ້ນໄມ້ ແລະ ສິ່ງປຸກສ້າງ.



ສແກນດ້ວຍ CamScanner

ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ASEAN HIWAY 15 (AH15) ໝາຍເຖິງ ທາງຫຼວງອາຊຽນ ເລກທີ 15;
2. ຜູ້ໄດ້ຮັບຜົນກະທົບ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຄວາມເສຍຫາຍ ຕໍ່ຊັບສິນໃດ ໜຶ່ງ ຈາກກິດຈະກຳ ຂອງໂຄງການພັດທະນາ;
3. ທາງຫຼວງແຫ່ງຊາດ ໝາຍເຖິງ ທາງເຊື່ອມຈອດລະຫວ່າງ ນະຄອນຫຼວງໄປຫາເທດສະບານຂອງແຂວງ, ລະຫວ່າງແຂວງ ຫາ ແຂວງ, ທາງຍຸດທະສາດສາຍຫຼັກ ທີ່ໄດ້ຮັບຜົນປະໂຫຍດລວມຂອງຊາດ, ວຽກງານ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຜົນປະໂຫຍດລະຫວ່າງຊາດ ທັງມີຄວາມສຳຄັນທາງດ້ານ ເສດຖະກິດ-ສັງຄົມ ແລະ ເຊື່ອມຈອດ ກັບດ່ານສາກົນ ແລະ ລະຫວ່າງປະເທດ;
4. **ເຂດສະຫງວນຢູ່ໜ້າດິນຂອງທາງຫຼວງແຫ່ງຊາດ** ໝາຍເຖິງ ການກຳນົດພື້ນທີ່ທາງຫຼວງແຫ່ງຊາດມີ ລວງ ກວ້າງ ເບື້ອງລະ 25 ມ (ຊາວຫ້າແມັດ) ນັບແຕ່ໃຈກາງທາງອອກໄປ;
5. **ຊັບສິນປະເພດຕົ້ນໄມ້ອຸດສາຫະກຳ, ໄມ້ໃຫ້ໝາກ** ໝາຍເຖິງ ຕົ້ນໄມ້ຊະນິດຕ່າງໆ ທີ່ເຈົ້າຂອງໄດ້ປູກ ແລະ ນຳໃຊ້ປະໂຫຍດ ເຊັ່ນ: ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ອຸດສະຫະກຳ, ທີ່ມີອາຍຸ 1 ປີຂຶ້ນໄປ;
6. **ລະບົບສາທາລະນຸປະໂພກ** ໝາຍເຖິງ ການສະໜອງສິ່ງອຳນວຍຄວາມສະດວກ ທາງການບໍລິການ ສາທາລະນະທີ່ຈຳເປັນ ເຊັ່ນ: ໄຟຟ້າ, ນ້ຳປະປາ, ໂທລະສັບ, ສາຍສື່ງແຫ່ງຊາດ (ສາຍໃຍແກ້ວ) ແລະ ອື່ນໆ.

ມາດຕາ 4 ນະໂຍບາຍຂອງ ລັດ

ລັດສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ໃຫ້ທຶນ ເຂົ້າໃນການພັດທະນາໂຄງການກໍ່ສ້າງຂົວໃໝ່ ແທນຂົວເກົ່າ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊຽນເລກທີ 15 (AH15) ໃຫ້ໄປ ຕາມຈຸດປະສົງ, ປະກອບສ່ວນຕາມກົດໝາຍ ແລະ ລະບຽບການ;

ຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ອຳນວຍຄວາມສະດວກໃຫ້ແກ່ຜູ້ໃຫ້ທຶນ ແລະ ຜູ້ຮັບເໝົາ ກໍ່ສ້າງໃຫ້ໄດ້ຈັດຕັ້ງປະຕິບັດຕາມແຜນການ;

ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ຜູ້ໃຫ້ທຶນພັດທະນາ ແລະ ຜູ້ຮັບເໝົາກໍ່ສ້າງໃຫ້ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ມາດຕາ 5 ຫຼັກການ

ໂຄງການກໍ່ສ້າງຂົວໃໝ່ແທນຂົວເກົ່າ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊຽນ ເລກທີ 15 (AH15) ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ໃຫ້ຖືກຕ້ອງສອດຄ່ອງຕາມນະໂຍບາຍຂອງພັດ, ລັດຖະທຳມະນູນ, ນິຕິກຳ, ລະບຽບການ ແລະ ແຜນ ພັດທະນາເສດຖະກິດ-ສັງຄົມ ຂອງແຂວງບໍ່ຜິດຫ່ຽງ;
2. ມີການປະສານສົມທົບ, ປຶກສາຫາລື, ເຂົ້າຮ່ວມລະຫວ່າງພາກສ່ວນ, ຜູ້ໃຫ້ທຶນ ແລະ ຜູ້ຮັບເໝົາ ແລະ ຜູ້ໄດ້ຮັບ ຜົນກະທົບ;
3. ຮັບປະກັນສິດຜົນປະໂຫຍດຂອງພັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
4. ຮັບປະກັນຄວາມສະເໝີພາບ, ເປັນທຳ, ໂປ່ງໃສ, ເປັນເອກະພາບ, ບູລິມະ ແລະ ຄວາມຍືນຍົງ.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງຂົວໃໝ່ ແທນຂົວເກົ່າ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊຽນ ເລກທີ AH15, ຄື: ບ້ານທ່າບັກ, ບ້ານຮ່ວມຈິດ, ບ້ານຫຼັກ 12, ບ້ານຫຼັກ 7 ແລະ ບ້ານ [illegible].



ສະແກນດ້ວຍ CamScanner

[illegible] ເພື່ອຈັດຕັ້ງ
[illegible]

## ໝວດທີ 2
## ຮູບແບບ ແລະ ປະເພດຊັບສິນທີ່ໄດ້ຮັບຜົນກະທົບ

ມາດຕາ 7 ຮູບແບບທີ່ໄດ້ຮັບຜົນກະທົບ

[illegible]ຈັດຕັ້ງປະຕິບັດໂຄງການ ຈະມີຜົນກະທົບໂດຍກົງ ຕໍ່ຊັບສິນ ໃນ 2 ຮູບແບບຄື:

1. ຜົນກະທົບແບບຖາວອນ: ແມ່ນຜົນກະທົບຕໍ່ຊັບສິນທີ່ນອນໃນເຂດຂອງໂຄງການ, ຊັບສິນທີ່ຖືກຜົນກະທົບຈະສູນເສຍສິດນຳໃຊ້ຢ່າງຖາວອນ ໂດຍຈະໄດ້ມອບສິດການນຳໃຊ້ໃຫ້ກັບເຈົ້າຂອງໂຄງການເປັນຜູ້ນຳໃຊ້ແບບຖາວອນ;
2. ຜົນກະທົບແບບຊົ່ວຄາວ: ແມ່ນຜົນກະທົບໄລຍະສັ້ນ ຈາກການນຳໃຊ້ພື້ນທີ່ໃນໄລຍະການກໍ່ສ້າງເທົ່ານັ້ນ ພາຍຫຼັງສຳເລັດການກໍ່ສ້າງໂຄງການ, ເຈົ້າຂອງໂຄງການຈະຕ້ອງໄດ້ປັບປຸງໃຫ້ຢູ່ໃນສະພາບເດີມ, ສາມາດນຳໃຊ້ໄດ້ ແລະ ສົ່ງຄືນເຈົ້າຂອງເດີມສືບຕໍ່ນຳໃຊ້.

ມາດຕາ 8 ປະເພດຊັບສິນທີ່ໄດ້ຮັບຜົນກະທົບ

ປະເພດຊັບສິນທີ່ໄດ້ຮັບຜົນກະທົບ ປະກອບມີ: ເນື້ອທີ່ດິນ, ສິ່ງປຸກສ້າງ ແລະ ຕົ້ນໄມ້ ຄື:

1. ເນື້ອທີ່ດິນ ທີ່ນອນໃນເຂດຂອງໂຄງການນີ້ປະກອບມີ: ເນື້ອທີ່ດິນກະສິກຳ;
2. ຊັບສິນປະເພດຕົ້ນໄມ້ ທີ່ນອນໃນເຂດຂອງໂຄງການ ປະກອບມີ: ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ອຸດສະຫະກຳ;
3. ຊັບສິນປະເພດສິ່ງປຸກສ້າງ ທີ່ນອນໃນເຂດຂອງໂຄງການ ປະກອບມີ: ຖຽງນາ, ຄອກລີດ, ປ້ອມຍາມຮົ້ວ ແລະ ຮົ້ວຕາໜ່າງໝາກກອກ.

## ໝວດທີ 3
## ນະໂຍບາຍ ແລະ ເງື່ອນໄຂການທົດແທນຄ່າເສຍຫາຍ

ມາດຕາ 9 ນະໂຍບາຍການທົດແທນຄ່າເສຍຫາຍ

ຜູ້ທີ່ໄດ້ຮັບຜົນກະທົບຈະໄດ້ຮັບນະໂຍບາຍການທົດແທນ ດັ່ງນີ້:

1. ຜູ້ທີ່ໄດ້ຮັບຜົນກະທົບກ່ຽວກັບສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ ທີ່ສູນເສຍທີ່ດິນທັງໝົດ ຫຼື 80% ຂຶ້ນໄປ, ສ່ວນທີ່ດິນທີ່ຍັງເຫຼືອບໍ່ສາມາດນຳໃຊ້ໄດ້ອີກ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ;
2. ຜູ້ໄດ້ຮັບຜົນກະທົບກ່ຽວກັບສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍທີ່ດິນພຽງສ່ວນໃດໜຶ່ງ, ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍໃນສ່ວນທີ່ໄດ້ສູນເສຍນັ້ນ ດ້ວຍມູນຄ່າເປັນເງິນທີ່ຄິດໄລ່ໄວ້, ສ່ວນເນື້ອທີ່ດິນທີ່ຍັງເຫຼືອທີ່ສາມາດນຳໃຊ້ໄດ້ ຜູ້ທີ່ໄດ້ຮັບຜົນກະທົບຕ້ອງໄດ້ລົງເອກະສານກ່ຽວກັບສິດນຳໃຊ້ເນື້ອທີ່ດິນຕອນນັ້ນຄືນໃໝ່ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ໂດຍເຈົ້າຂອງໂຄງການຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ເກີດຂຶ້ນຈາກການປ່ຽນແປງສິດນຳໃຊ້ເນື້ອທີ່ດິນ;
3. ຜູ້ທີ່ສູນເສຍສິ່ງປຸກສ້າງທັງໝົດ ຫຼື ບາງສ່ວນ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍດ້ວຍມູນຄ່າປ່ຽນແທນຂອງສິ່ງປຸກສ້າງດັ່ງກ່າວ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທີ່ເປັນເຈົ້າຂອງກຳມະສິດຂອງສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫຼຸ້ຍຫ້ຽນ ຫຼື ບໍ່ມີການຫຼຸດຄ່າທົດແທນສຳລັບວັດຖຸທີ່ຍັງເຫຼືອ;



ສແກນດ້ວຍ CamScanner

4. ການປະເມີນການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ໃນທຸກໆກໍລະນີເຈົ້າຂອງໂຄງການຕ້ອງໄດ້ປະສານຜົນທົບກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງ ເພື່ອຕີລາຄາມາດຕາ, ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແຜນທົດແທນຄ່າເສຍຫາຍ;
5. ຊັບສິນທີ່ມີຂໍ້ຂັດແຍ່ງກັບບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ ຕ້ອງໄດ້ສ້າງບົດບັນທຶກຕົວເລກຜົນກະທົບຄ່າເສຍຫາຍໄວ້, ພາຍຫຼັງທີ່ສຳເລັດການແກ້ໄຂຂໍ້ຂັດແຍ່ງແລ້ວ ຈຶ່ງໃຫ້ສະເໜີຂໍການທົດແທນ;
6. ການຄິດໄລ່ລາຄາຫົວໜ່ວຍທົດແທນໄດ້ກຳນົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້;
7. ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ອຸດສະຫະກຳ, ທີ່ນອນໃນເຂດສະຫງວນຂອງຂົວ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊ່ຽນ ເລກທີ 15(AH15) ແມ່ນຈະໄດ້ຮັບການທົດແທນ.

**ມາດຕາ 10 ເງື່ອນໄຂການຂຶ້ນບັນຊີຊັບສິນຕໍ່ຜູ້ທີ່ໄດ້ຮັບຜົນກະທົບ**

ເງື່ອນໄຂການຂຶ້ນບັນຊີຕໍ່ຜູ້ໄດ້ຮັບຜົນກະທົບຈາກໂຄງການ ມີດັ່ງນີ້:

1. ສຳລັບທີ່ດິນ ຕ້ອງແມ່ນຊັບສິນທີ່ນອນຢູ່ໃນເຂດໂຄງການ ແລະ ຕ້ອງແມ່ນສິດນຳໃຊ້ທີ່ດິນ, ສິດໃຊ້ທີ່ດິນ ທີ່ມີເອກະສານຢັ້ງຢືນຢ່າງຖືກຕ້ອງຕາມກົດໝາຍ;
2. ສຳລັບສິ່ງປຸກສ້າງ ຕ້ອງແມ່ນສິ່ງປຸກສ້າງທີ່ສາມາດນຳໃຊ້ໄດ້ ແລະ ຕ້ອງແມ່ນຊັບສິນທີ່ມີກ່ອນມື້ປະກາດເລີ່ມຕົ້ນໂຄງການ ໃນວັນທີ 14 ຕຸລາ 2024;
3. ສຳລັບຕົ້ນໄມ້ ຕ້ອງແມ່ນຕົ້ນໄມ້ທີ່ນອນຢູ່ໃນເຂດໂຄງການ ແລະ ຕ້ອງແມ່ນຊັບສິນທີ່ມີກ່ອນມື້ປະກາດເລີ່ມຕົ້ນໂຄງການ ໃນວັນທີ 14 ຕຸລາ 2024.

**ມາດຕາ 11 ເງື່ອນໄຂການທົດແທນຕໍ່ຊັບສິນໄດ້ຮັບຜົນກະທົບ**

ຊັບສິນທີ່ໄດ້ຮັບຜົນກະທົບຈາກການພັດທະນາໂຄງການ ທີ່ມີສິດໄດ້ຮັບການທົດແທນ ມີດັ່ງນີ້:

1. ໄດ້ຮັບການຂຶ້ນບັນຊີ;
2. ຜ່ານການຕີລາຄາຄິດໄລ່ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຍົກຍ້າຍສິ່ງກີດຂວາງ ແລະ ຄົ້ນຄວ້ານະໂຍບາຍ, ລາຄາຫົວໜ່ວຍທົດແທນຜົນກະທົບຈາກໂຄງການນີ້ ຮ່ວມກັບເຈົ້າຂອງກຳມະສິດຜູ້ທີ່ໄດ້ຮັບຜົນກະທົບ;
3. ຕ້ອງໄດ້ຮັບການຢັ້ງຢືນຈາກຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຍົກຍ້າຍສິ່ງກີດຂວາງ ແລະ ຄົ້ນຄວ້ານະໂຍບາຍ, ລາຄາຫົວໜ່ວຍທົດແທນຜົນກະທົບຈາກໂຄງການນີ້;
4. ຜູ້ໄດ້ຮັບຜົນກະທົບ ຈະຕ້ອງມີບັນຊີເງິນຝາກທະນາຄານ (ຖ້າຄອບຄົວໃດບໍ່ມີບັນຊີ ທາງໂຄງການຈະຊ່ວຍອຳນວຍຄວາມສະດວກໃນການເປີດບັນຊີໃຫ້, ສຳລັບເງິນເປີດບັນຊີ 50,000 ກີບ ແມ່ນຜູ້ໄດ້ຮັບຜົນກະທົບເປັນຜູ້ຮັບຜິດຊອບເອງ).

**ມາດຕາ 12 ການທົດແທນຄ່າເສຍຫາຍ**

ການທົດແທນຄ່າເສຍຫາຍຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການນີ້ ແມ່ນນຳໃຊ້ງົບປະມານຂອງລັດຖະບານລາວ (ງົບປະມານຂອງກະຊວງໂຍທາທິການ ແລະ ຂົນສົ່ງ) ໂດຍຈ່າຍໃຫ້ດ້ວຍເງິນສົດ ຫຼື ເປັນເງິນກີບ ດ້ວຍການໂອນເຂົ້າບັນຊີຂອງຜູ້ໄດ້ຮັບຜົນກະທົບ, ການທົດແທນຕ້ອງໄດ້ຈ່າຍໃຫ້ແລ້ວ ກ່ອນວັນເລີ່ມຕົ້ນການກໍ່ສ້າງ.



ສະແກນດ້ວຍ CamScanner

## ໝວດທີ 4
## ຫຼັກການການກຳນົດ ແລະ ວິທີການຄິດໄລ່ລາຄາທີ່ດິນ

ມາດຕາ 13 ຫຼັກການກຳນົດລາຄາທີ່ດິນ

ການກຳນົດລາຄາ, ປະເພດທີ່ດິນ ແລະ ສິ່ງປຸກສ້າງ ແມ່ນໄດ້ຈາກການປະເມີນໝາຍອ້ອມ ຕາມປະເພດ ແລະ ຈຳນວນທີ່ໄດ້ຮັບຜົນກະທົບໃນແຕ່ລະປະເພດ ເຊັ່ນ: ທີ່ດິນ, ສິ່ງປຸກສ້າງ ແລະ ຕົ້ນໄມ້ ທີ່ໄດ້ຜ່ານການປະເມີນ ດັ່ງນີ້:

1. **ປະເພດເນື້ອທີ່ດິນ:** ແມ່ນໄດ້ມີການເກັບກຳ ແລະ ລວມໝວດຂໍ້ມູນຈາກໝາຍແຜ່ງມາພິຈາລະນາຄວບຄຽງກັບ ລາຄາທີ່ດິນສະບັບນີ້ ເພື່ອໃຫ້ແທດເໝາະກັບສະພາບເສດຖະກິດໃນປະຈຸບັນນີ້: ເຊັ່ນ ລາຄາທີ່ດິນໂຄງການກໍ່ສ້າງຂົວ 11 ແຫ່ງ (ທາງເລກທີ 13 ໃຕ້) ທຽບໃສ່ລາຄາການຊື້-ຂາຍ ໃນທ້ອງຖິ່ນໃນເຂດ 5 ບ້ານ ທີ່ຖືກຜົນກະທົບຈາກໂຄງການ ຄຸນນັບຍັດຕາແລກປ່ຽນ ຕາມຂໍ້ມູນອ້າງອີງໃນເວບໄຊຂອງທະນາຄານ ແຫ່ງ ສປປ ລາວ ໃນໄລຍະວັນທີ 7 ພະຈິກ 2023 ຫາ ວັນທີ ... ຕິກາລິງຮັບຮອງໂຄງການກໍ່ສ້າງຂົວ 11 ແຫ່ງ ວັນທີ 8 ພຶດສະພາ 2024 ແລ້ວມາທຽບກັບລາຄາປະເມີນທີ່ດິນຂອງແຂວງ ສະບັບເລກທີ 193/ຂບຊ, ລົງວັນທີ 6 ເມສາ 2023 ແລ້ວຫານລວງ, ເພື່ອກຳນົດລາຄາທີ່ເໝາະສົມໃຫ້ສາມາດຈັດຕັ້ງປະຕິບັດໄດ້ ແລະ ໄດ້ກຳນົດເອົາລາຄາທີ່ອ່ອນທີ່ດິນແທນເປັນມີໂຍ ຕໍ່ຕາແມັດ;
2. **ປະເພດສິ່ງປຸກສ້າງ:** ແມ່ນເອົາລາຄາວັດສະດຸກໍ່ສ້າງຕາມທ້ອງຕະຫຼາດໃນໄລຍະການລົງເກັບກຳຂໍ້ມູນ ໃນເດືອນ ເມສາ ຫາ ພຶດສະພາ 2023 ມາທຽບກັບລາຄາທີ່ອ່ອນທີ່ທາງກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 26123/ຍທຂ, ລົງວັນທີ 16 ທັນວາ 2021 ແລະ ທຽບກັບລາຄາທີ່ດິນແທນໂຄງການພັດທະນາຕົວເມືອງຕາມແລວທາງອານຸພາກພື້ນແມ່ນ້ຳຂອງ 4 (ທີ່ໄດ້ທຽບອັດຕາເງິນເຟີ້ທີ່ກຳນົດໂດຍທະນາຄານກາງ ໃນຊ່ວງວັນທີ 8 ພຶດສະພາ 2024) ແລ້ວມາຫານ 3, ຊຶ່ງຜົນຫານ ເປັນລາຄາທີ່ອ່ອນທີ່ດິນແທນ ໃນຂໍ້ຕົກລົງສະບັບນີ້;
3. **ປະເພດຕົ້ນໄມ້:** ແມ່ນອີງຕາມຂໍ້ມູນຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ[illegible] ... 1901/ກປຊ, ລົງວັນທີ 11 ຕຸລາ 2023 ກ່ຽວກັບການຕົກລົງໂຄງສ້າງຕົ້ນຕົ້ນໄມ້ ... ໄມ້ໃຫ້ໝາກ, ພຶດຜັກ ປີ 2023 ຊຶ່ງລາຄາທີ່ອ່ອນປະເພດຕົ້ນໄມ້ ... ປັດໃຈ ຫຼື ຕົ້ນທຶນ, ມູນຄ່າທີ່ນຳໃຊ້ເຂົ້າໃນການປະເມີນ, ອາຍຸ ... ປະເພດຕ່າງໆ ມາເປັນຕົວກຳນົດລາຄາທີ່ອ່ອນທີ່ດິນແທນ.

ມາດຕາ 14 ວິທີການຄິດໄລ່ມູນຄ່າທີ່ດິນແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບ

ການຄິດໄລ່ມູນຄ່າທີ່ດິນແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົบ ... ໄດ້ຮັບຜົນກະທົบ ຄຸນນັບຈາກທີ່ອ່ອນ ... ດັ່ງກ່າວ ແມ່ນມູນຄ່າທີ່ດິນແທນ ... ມີວິທີການ ... ດັ່ງນີ້:

1. ການຄິດໄລ່ມູນຄ່າທີ່ດິນແທນຊັບສິນ ... ປະເພດ ... ດັ່ງນີ້:

ແມ່ນອີງຕາມ ... ຈາກໂຄງການ, ໂດຍ ... ດັ່ງນີ້:

ມູນຄ່າ ... (ທີ່ ...

ສແກນດ້ວຍ CamScanner

2. ການຄິດໄລ່ມູນຄ່າທົດແທນຊັບສິນປະເພດສິ່ງປຸກສ້າງ

ການຄິດໄລ່ມູນຄ່າ ປະເພດສິ່ງປຸກສ້າງ ແມ່ນຄິດໄລ່ຕາມຂັ້ນຂ່ອນປະເພດລັດສະດຸຂອງສິ່ງປຸກ [illegible] ໂດຍໃຫ້ເອົາ [illegible] ເປັນຂ່ອນປະກອບຂອງໂຄງສ້າງຫຼັກເຊັ່ນ: ຫຼັງຄາມຸງດ້ວຍ [illegible] ຝາ, ປະຕູ, ປ່ອງ ແລະ ຝາຕາມລຳດັບ, ໂດຍແຍກການຄິດໄລ່ມູນຄ່າຕາມປະ [illegible] ປະກອບຂອງໂຄງສ້າງນັ້ນ ລວມກັບລາຄາຫົວໜ່ວຍທົດແທນ ມາລວມກັນເປັນມູນຄ່າທົດແທນ [illegible] ສິ່ງປຸກສ້າງນັ້ນ ຫຼື ບາງຊັບສິນ ອາດຈະຖືກຜົນກະທົບບາງສ່ວນ ກໍຈະຄິດໄລ່ສະເພາະແຕ່ສ່ວນ ທີ່ໄດ້ຮັບຜົນກະທົບ ຕາມວິທີການຄິດໄລ່ ດັ່ງນີ້:

ມູນຄ່າທົດແທນ (ກີບ) = [ລາຍການໜ້າວຽກ X ລາຄາຫົວໜ່ວຍທົດແທນ (ກີບ/ມ2);

3. ການຄິດໄລ່ມູນຄ່າທົດແທນຊັບສິນປະເພດໄມ້ກິນໝາກ, ໄມ້ອຸດສາຫະກຳ

ພື້ນຖານການຄິດໄລ່ລາຄາຫົວໜ່ວຍທົດແທນ ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ອຸດສາຫະກຳຕ່າງໆ ແມ່ນ ພິຈາລະນາຈາກການໃຫ້ຜົນຂອງປະເພດຕົ້ນໄມ້ ແລະ ຕົ້ນທຶນການລົງທຶນກັບຕົ້ນໄມ້ປະເພດນັ້ນໆ, ໂດຍ ປັດໃນມູນຄ່າດັ່ງກ່າວນັ້ນ ໄດ້ຄິດໄລ່ເປັນມູນຄ່າລວມຂອງຕົ້ນໄມ້ນັ້ນ ໂດຍລວມເປັນມູນຄ່າກີບຕໍ່ຕົ້ນ, ຊຶ່ງໄດ້ ກຳນົດຊຸດຄິດໄລ່ມູນຄ່າທົດແທນ ດັ່ງນີ້ :

ມູນຄ່າທົດແທນ (ກີບ) = [ປະເພດຕົ້ນໄມ້ ( ຕົ້ນ ) X ລາຄາຫົວໜ່ວຍ (ກີບ/ຕົ້ນ)]

**ມາດຕາ 15 ລາຄາຫົວໜ່ວຍທົດແທນ**

ລາຄາຫົວໜ່ວຍທົດແທນ ແມ່ນກຳນົດມູນຄ່າຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍແຍກ ເປັນ ສາມ ປະເພດຄື: ທີ່ດິນ, ສິ່ງປຸກສ້າງ, ປະເພດຕົ້ນໄມ້ ແລະ ຜົນລະປຸກ ເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:

1. ລາຄາຫົວໜ່ວຍທົດແທນ ປະເພດທີ່ດິນ.

| ລ/ດ | ປະເພດທີ່ດິນ | ລິດນຳໃຊ້ທີ່ດິນ (ກີບ/ຕາແມັດ) |
|---|---|---|
| 1 | ດິນກະສິກຳ | 85,000 |

2. ລາຄາຫົວໜ່ວຍທົດແທນ ປະເພດສິ່ງປຸກສ້າງ:

| ລ/ດ | ລາຍການ | ລາຄາຫົວໜ່ວຍໄລ່ຕາມບໍລິມາດ | |
|---|---|---|---|
| | | ຫົວໜ່ວຍ | ລາຄາ ໜ/ໜ (ກີບ) |
| I. | ວຽກດິນ | | |
| 1 | ອານາໄມພື້ນທີ, ປັບເດີ່ນ | ມ2 | 15,000 |
| 2 | ຕີຜັ່ງຈັບລະດັບ | ມ2 | 15,000 |
| 3 | ຂຸດດິນປະສົມຊາຍດ້ວຍແຮງງານຄົນ | ມ3 | 182,000 |
| 4 | ຂຸດດິນດາຫ,ດິນໜຽວ ດ້ວຍແຮງງານຄົນ | ມ3 | 212,000 |
| 5 | ຂຸດດິນຫີນແຮ່,ດິນໜາກຄອມ ຮ/ງ ຄົນ | ມ3 | 228,000 |
| 6 | ຂຸດດິນດານ ຮ/ງ ຄົນ | ມ3 | 243,000 |
| 7 | ຖົມດິນທີ່ຂຸດຂຶ້ນ,ລົງທີ່ເດີມ | ມ3 | 45,000 |
| 8 | ຖົມຊາຍຫິດນ້ຳຕ່ຳແໜ້ນ | ມ3 | 182,000 |
| 9 | ຖົມດິນຫິດນ້ຳຕ່ຳແໜ້ນ | ມ3 | 175,000 |
| II. | ວຽກເບຕົ້ງ | | |



ສແກນດ້ວຍ CamScanner

| | | | |
|---|---|---|---|
| 1 | ພື້ນຫລໍ່ຮອບຫຼັກຄອນກຣີດ(ບໍ່ຂັດມັນ) | ມ2 | 208,000 |
| 2 | ພື້ນຫລໍ່ຮອບຫຼັກຄອນກຣີດ(ບໍ່ຂັດມັນ)+ຂັດໜາຍ | ມ2 | 304,200 |
| 3 | ພື້ນຫລໍ່ຮອບຫຼັກຄອນກຣີດ(ບໍ່ຂັດມັນ) +ຂັດມັນ | ມ2 | 331,900 |
| 4 | ພື້ນຫລໍ່ທຳມະດາ(ບໍ່ຂັດມັນ) | ມ2 | 221,400 |
| 5 | ພື້ນຫລໍ່ທຳມະດາ(ບໍ່ຂັດມັນ)+ຂັດໜາຍ | ມ2 | 278,000 |
| 6 | ພື້ນຫລໍ່ທຳມະດາ(ບໍ່ຂັດມັນ)+ຂັດມັນ | ມ2 | 314,000 |
| 7 | ຫລໍ່ຫຼັກເປ່ືອນ 15 mpa | ມ3 | 2,415,000 |
| 8 | ຫລໍ່ຮອບຫຼັກຄອນກຣີດ 25 Mpa, | ມ3 | 3,851,000 |
| 9 | ເຫັກຕົ້ນ ຫລໍ່ຮອບຫຼັກ 25 Mpa 20x20 ຊມ | ມ3 | 6,184,000 |
| 10 | ເຫັກຫລໍ່ຮອບຫຼັກ fc'=25 Mpa, 20x20 ຊມ | ມ3 | 6,184,000 |
| III. | ເຫັກຫລໍ່ຄໍ້າເລັດຊຸບ ແລະ ເຫັກໄມ້ | | |
| 1 | ເຫັກຫລໍ່ຮອບຫຼັກ 15x15 | ມຍ | 103,000 |
| 2 | ເຫັກຫລໍ່ຮອບຫຼັກ 18x18 | ມຍ | 118,400 |
| 3 | ເຫັກຫລໍ່ຮອບຫຼັກ 20x20 | ມຍ | 170,000 |
| 4 | ຫລໍ່ຮອບເລັກຄານດິນ 20x20 | ມຍ | 170,000 |
| IV. | ລາຄາຫົວໜ່ວຍທົດແທນປະເພດຝາ | | |
| 1 | ຝາດິນຈີ່ ໜາ 20 ຊັ້ງຕີແມັດ (ຊມ) ໄມກໜ້າດຽວ | ມ2 | 660,000 |
| 2 | ຝາດິນຈີ່ ໜາ 20 ຊັ້ງຕີແມັດ (ຊມ) ບໍ່ໄດ້ໄມກ | ມ2 | 570,000 |
| 3 | ຝາດິນຈີ່ ໜາ 10 ຊມ, ບໍ່ໄດ້ໄມກ | ມ2 | 280,000 |
| 4 | ຝາດິນບ້ອກໜາ 10 ຊມ, ລວມໄມກສອງໜ້າ | ມ2 | 370,000 |
| 5 | ຝາດິນບ້ອກໜາ 10 ຊມ, ລວມໄມກໜ້າດຽວ | ມ2 | 270,000 |
| 6 | ຝາດິນບ້ອກໜາ 10 ຊມ, ບໍ່ໄດ້ໄມກ | ມ2 | 160,000 |
| V. | ລາຄາຫົວໜ່ວຍທົດແທນປະເພດຫຼັງຄາ ແລະ ເພດານ ພ້ອມດ້ວຍໂຄງ | | |
| 1 | ຫຼັງຄາມຸງສັງກະສີພ້ອມໂຄງໄມ້ | ມ2 | 272,000 |
| VI. | ປະເພດໂຄງສ້າງເຮັດດ້ວຍ: | | |
| - | ປູພື້ນໄມ້ ແລະ ແອ້ມຝາ | | |
| 1 | ໂຄງສ້າງໄມ້ກົມ, ພື້ນປູໄມ້ແປ້ນ, ຝາໄມ້ແປ້ນ, ມຸງຫຍ້າ ຫຼື ມຸງໜາ | ມ2 | 330,000 |
| 2 | ໂຄງສ້າງໄມ້ກົມ, ພື້ນປູໄມ້ແປ້ນ, ຝາໄມ້ແປ້ນ, ມຸງ ສັງກະສີ | ມ2 | 1,000,000 |
| VII. | ວຽກປະເພດອື່ນ | | |
| 1 | ຮື້ອເຫັກຫລໍ່ ໜາມໜາກຈັບ 4 ຂາ +ຕາໜ່ວງໜາມ ກອກ | ມ2 | [illegible] |

3. ລາຄາຫົວໜ່ວຍທົດແທນ ປະເພດຕົ້ນໄມ້:

| ລ/ດ | ລາຍການ | ราคา (กีบ) |
|---|---|---|
| | | 1 ปี (ปีแรก) | 2 ปี (ปีที่ 2) | 3 ปี (ปีที่ 3) | 4 ปี (ปีที่ 4) | 5 ปี (ปีที่ 5) | 6 ปี (ปีที่ 6) |
| | ຕົ້ນໄມ້ກົບໜາ ແລະ ໄມ້ດອກ ແລະ ກ | | | | | | |
| 1 | ขนาด 2 ว | | | | | | |

ສແກນດ້ວຍ CamScanner

| | | | | | | | |
|---|---|---|---|---|---|---|---|
| ... | ... | | | | | | 459,000 |
| ... | ... | | | | | | 385,000 |

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປົກປິດ, ຊຸກເຊື່ອງ, ບໍ່ຈິງໃຈແຈ້ງຂໍ້ມູນ ແລະ ປອມແປງເອກະສານ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງບຸກຄົນອື່ນ;
2. ໃຊ້ຄວາມຮຸນແຮງ, ນາບຂູ່, ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງ ໃນເວລາລິງຈັດຕັ້ງປະຕິບັດວຽກງານ;
3. ປຸກລະດົມໂຄສະນາໃສ່ຮ້າຍປ້າຍສີໃນທຸກຮູບແບບ ເປັນຕົ້ນ: ສື່ອອນລາຍຕ່າງໆ ໃນການປະຕິບັດຂໍ້ຕົກລົງສະບັບນີ້;
4. ການບຸກເບີກ, ການພັດທະນາກໍ່ສ້າງໃນເນື້ອທີ່ເຂດໂຄງການ ແລະ ມີພຶດຕິກຳອື່ນໆ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມ ສຳລັບພະນັກງານ**

ຫ້າມພະນັກງານ ມີພຶດຕິກຳ ດັ່ງນີ້:

1. ປົກປິດ, ຊຸກເຊື່ອງ, ບໍ່ຈິງໃຈແຈ້ງຂໍ້ມູນ ແລະ ປອມແປງເອກະສານ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນອື່ນ;
2. ລວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
3. ໃຊ້ສິດໜ້າທີ່ເກີນຂອບເຂດ ຫຼື ບໍ່ມີຄວາມຮັບຜິດຊອບຕໍ່ໜ້າທີ່ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ປະຊາຊົນ;
4. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ຫຼື ມີພຶດຕິກຳອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

## ໝວດທີ 6
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 18 ການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງມີ 3 ຮູບແບບ ດັ່ງນີ້:

1. ຮູບແບບການປະນີປະນອມ;
2. ຮູບແບບການແກ້ໄຂທາງດ້ານບໍລິຫານ;
3. ຮູບແບບການແກ້ໄຂຕາມຂະບວນການຍຸຕິທຳ.

**ມາດຕາ 19 ຮູບແບບການປະນີປະນອມ**

ໃນກໍລະນີມີຂໍ້ຂັດແຍ່ງ[illegible] ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ມີສິດ[illegible] ປະນີປະນອມ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ທັງສອງຝ່າຍ[illegible]



Scanned with CamScanner

ມາດຕາ 20 ຮູບແບບການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບການທົດແທນຄ່າເສຍຫາຍຊຶ່ງບໍ່ຮ້າຍແຮງ ໃຫ້ຄຸ້ມກໍລະນີເປັນເຈົ້າການຄົ້ນຄວ້າ ແລະ ແກ້ໄຂກັນກ່ອນ ຫຼື ສະເໜີຕໍ່ອົງການຄຸ້ມຄອງແກ້ໄຂ.

ມາດຕາ 21 ຮູບແບບການແກ້ໄຂຕາມຂະບວນການຍຸຕິທຳ

ໃນກໍລະນີເກີດຂໍ້ຂັດແຍ່ງທີ່ບໍ່ສາມາດແກ້ໄຂໄດ້ ຝ່າຍໃດຝ່າຍໜຶ່ງມີສິດສະເໜີເຂົ້າສູ່ຂະບວນການຍຸຕິທຳ.

## ໝວດທີ 7
## ອົງການຄຸ້ມຄອງ

ມາດຕາ 22 ອົງການຄຸ້ມຄອງ

ອົງການຄຸ້ມຄອງນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງຂົວໃໝ່ແທນຂົວເກົ່າ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊຽນ ເລກທີ 15 (AH15) ເຂດແຂວງບໍລິຄຳໄຊ ຊຶ່ງປະກອບມີພາກສ່ວນຕ່າງໆ ດັ່ງນີ້:

1. ຄະນະຮັບຜິດຊອບຊີ້ນຳລວມຂັ້ນແຂວງ;
2. ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງຂັ້ນເມືອງ;
3. ອົງການປົກຄອງບ້ານ.

ມາດຕາ 23 ຄະນະຮັບຜິດຊອບຊີ້ນຳລວມຂັ້ນແຂວງ

ຄະນະຮັບຜິດຊອບຊີ້ນຳລວມຂັ້ນແຂວງ ປະກອບມີບັນດາທ່ານຈາກພາກສ່ວນ ດັ່ງນີ້: ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ, ຮອງເຈົ້າເມືອງຄຳເກີດ, ຫ້ອງວ່າການແຂວງ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກ ແຜນການ ແລະ ການລົງທຶນແຂວງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ພະແນກຍຸຕິທຳແຂວງ ແລະ ຄະນະຄຸ້ມຄອງໂຄງການກໍ່ສ້າງຂົວໃໝ່ແທນຂົວເກົ່າ 6 ແຫ່ງ ຕາມ[illegible] ຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊຽນເລກທີ 15(AH15).

ມາດຕາ 24 ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງຂັ້ນເມືອງ

ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງຂັ້ນເມືອງ ປະກອບມີບັນດາທ່ານຈາກພາກສ່ວນ ດັ່ງນີ້: [illegible] ເຈົ້າເມືອງຄຳເກີດ, ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ, [illegible] ຄຳເກີດ, ສະຫະພັນແມ່ຍິງເມືອງ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ, ຫ້ອງການ [illegible] ມະຊາດ ແລະ ສິ່ງແວດລ້ອມເມືອງ, ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງການ [illegible] ເມືອງ ແລະ ຄະນະຄຸ້ມຄອງໂຄງການ ກໍ່ສ້າງຂົວໃໝ່ແທນຂົວເກົ່າ 6 ແຫ່ງ ຕາມ[illegible] ທີ່ເປັນທາງຫຼວງອາຊຽນເລກທີ 15(AH15).

ມາດຕາ 25 ອົງການປົກຄອງບ້ານ

ອົງການປົກຄອງບ້ານປະກອບມີ: ນາຍບ້ານ, ບັ[illegible] ແລະ ກຳມັ[illegible] ບ້ານ

ມາດຕາ 26 ສິດ ແລະ ໜ້າທີ່ ຂອງຄະນະຊີ້ນຳລວມຂັ້ນແຂວງ

ມີສິ[illegible] ໜ້າທີ່ ດັ[illegible]

1. ປະຕິ[illegible] ມະ[illegible]

[illegible] ແຜນດ້ານງົບປະມານ ຫ້ອງການບໍລິຫານ ແລະ ອົງການການທິດແທນໃນທຸກເຂດເມືອງທີ່ໄດ້ຮັບຜົນກະທົບຂອງໂຄງການ;

3. ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວວຽກງານທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ;
4. ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບນິຕິກຳ ທີ່ກ່ຽວຂ້ອງຂອງໂຄງການ ໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງທົ່ວເຖິງກ່ຽວກັບແນວທາງການຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືໃນການເຄື່ອນໄຫວວຽກງານ, ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ເຂົ້າຮ່ວມຂະບວນການທົດແທນກັບຜູ້ໄດ້ຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກຳຂໍ້ມູນຊັບສິນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ;
6. ຮັບຄຳສະເໜີການແກ້ໄຂຂໍ້ຄັດແຍ່ງ ທີ່ເມືອງບໍ່ສາມາດແກ້ໄຂໄດ້, ຖ້າຍັງແກ້ໄຂບໍ່ສຳເລັດ ແມ່ນສະເໜີເຂົ້າຂະບວນບຸຕິທຳ;
7. ປະຕິບັດຕາມການມອບໝາຍຂອງຂັ້ນເທິງກໍ່ຄືລັດຖະບານ.

**ມາດຕາ 27 ສິດ ແລະ ໜ້າທີ່ຂອງຄະນະກຳມະການໄກ່ເກ່ຍສິ່ງກີດຂວາງຂັ້ນເມືອງ**

ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຄະນະກຳມະການໄກ່ເກ່ຍສິ່ງກີດຂວາງຂັ້ນເມືອງ ມີດັ່ງນີ້:

1. ລາຍງານຜົນການຈັດຕັ້ງປະຕິບັດວຽກງານທົດແທນໃນເຂດໂຄງການທີ່ໄດ້ຮັບຜົນກະທົບ;
2. ວາງແຜນການເຄື່ອນໄຫວວຽກງານ, ຂັ້ນແຜນດ້ານງົບປະມານ ຫ້ອງວຽກງານບໍລິຫານ ແລະ ວຽກງານການທົດແທນໃນທຸກຂົງເຂດເມືອງທີ່ໄດ້ຜົນກະທົບຂອງໂຄງການ;
3. ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວວຽກງານທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ;
4. ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບນິຕິກຳ ທີ່ກ່ຽວຂ້ອງຂອງໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງທົ່ວເຖິງກ່ຽວກັບແນວທາງການຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືໃນການເຄື່ອນໄຫວວຽກງານ, ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ເຂົ້າຮ່ວມຂະບວນການທົດແທນ ກັບຜູ້ໄດ້ຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກຳຂໍ້ມູນຊັບສິນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ;
6. ຮັບຄຳສະເໜີການແກ້ໄຂຂໍ້ຄັດແຍ່ງ ທີ່ບ້ານບໍ່ສາມາດແກ້ໄຂໄດ້, ຖ້າຍັງແກ້ໄຂບໍ່ສຳເລັດ ແມ່ນສະເໜີຫາຄະນະຊີ້ນຳລວມຂັ້ນແຂວງ;
7. ປະຕິບັດຕາມການມອບໝາຍຂອງຂັ້ນເທິງ ກໍ່ຄືຂັ້ນແຂວງ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ສິດ ໜ້າທີ່ຄວາມຮັບຜິດຊອບອົງການປົກຄອງບ້ານ ມີດັ່ງນີ້:

1. ລົງສຳອົບຮົມ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນຮັບຮູ້, ເຂົ້າໃຈກ່ຽວກັບແຜນພັດທະນາໂຄງການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມກິດຈະກຳຂອງໂຄງການ ໃນຂອບເຂດທີ່ຕົນຮັບຜິດຊອບ;
3. ເປັນເຈົ້າການເຂົ້າຮ່ວມຂະບວນແກ້ໄຂຂໍ້ຄັດແຍ່ງ ທຳອິດທຸກໆ ທີ່ມີເກີດຂຶ້ນ ຈາກຜູ້ໄດ້ຮັບຜົນກະທົບຈາກໂຄງການ, ລົງລວມບັນຫາທີ່ມີເກີດຂຶ້ນ ແລະ ແຈ້ງໃຫ້ໜ່ວຍງານທີ່ກ່ຽວຂ້ອງໄດ້ຮັບຊາບຕາມລຳດັບ;
4. ຮັບຄຳສະເໜີການແກ້ໄຂຂໍ້ຄັດແຍ່ງ ຈາກຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການທີ່ທ່ານບ້ານບໍ່ໄດ້ແກ້ໄຂ ເປັນທຳ ແລະ ບໍ່ສາມາດແກ້ໄຂໄດ້, ຖ້າຍັງແກ້ໄຂບໍ່ສຳເລັດ ແມ່ນສະເໜີຫາຄະນະກຳມະການໄກ່ເກ່ຍສິ່ງກີດຂວາງຂັ້ນເມືອງ;

5. [illegible] ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ກໍຄືຂັ້ນເມືອງ;
6. [illegible] ການທົດແທນຊັບສິນກັບຄອບຄົວທີ່ໄດ້ຮັບຜົນກະທົບ.

## ໝວດທີ 8
## ອົງການກວດກາ

### ມາດຕາ 29 ອົງການກວດກາ

ອົງການກວດກາການປະຕິບັດນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງ ຂົວໃໝ່ແທນຂົວເກົ່າ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊ່ຽນ ເລກທີ 15 (AH15) ມີດັ່ງນີ້:

1. ອົງການກວດກາພາຍໃນປະກອບມີ: ຄະນະຊີ້ນຳໂຄງການ, ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຫ້ອງການປະຕິບັດງານຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານ;
2. ອົງການກວດກາພາຍນອກປະກອບມີ: ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການແນວລາວສ້າງຊາດແຂວງ, ສະຫະພັນນັກຮົບເກົ່າແຂວງ, ອົງການຈັດຕັ້ງມະຫາຊົນແຂວງ, ປະຊາຊົນບັນດາເຜົ່າ ແລະ ສື່ມວນຊົນ.

### ມາດຕາ 30 ເນື້ອໃນການກວດກາ

ເນື້ອໃນການກວດກາ ມີດັ່ງນີ້:

ກວດກາການຈັດຕັ້ງປະຕິບັດວຽກງານ ການທົດແທນຄ່າເສຍຫາຍຜົນກະທົບຈາກໂຄງການກໍ່ສ້າງ ຂົວໃໝ່ແທນຂົວເກົ່າ 6 ແຫ່ງ ຕາມທາງຫຼວງແຫ່ງຊາດ ເລກ 8 ທີ່ເປັນທາງຫຼວງອາຊ່ຽນເລກທີ 15 (AH15) ທີ່ເປັນທາງຫຼວງອາຊ່ຽນ ເລກທີ 15 ຕາມຂໍ້ຕົກລົງສະບັບນີ້ໄດ້ກຳນົດ;

1. ກວດກາເນື້ອໃນຄຳຮ້ອງທຸກ ແລະ ຂໍ້ມູນຂອງຜູ້ໄດ້ຮັບຜົນກະທົບ ໃຫ້ໄດ້ຮັບການແກ້ໄຂຂອດຄ່ອງ, ຖືກຕ້ອງ, ໂປ່ງໃສ ແລະ ເປັນທຳ ຕາມຂໍ້ຕົກລົງສະບັບນີ້ໄດ້ກຳນົດ.

### ມາດຕາ 31 ຮູບການກວດກາ

1. ກວດກາປົກກະຕິ ແມ່ນການກວດກາດຳເນີນໄປຕາມແຜນການ, ແຜນງານ ແລະ ໜ້າວຽກທີ່ໄດ້ກຳນົດໄວ້ ໃນເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງການລ່ວງໜ້າ ແມ່ນການກວດກາຕາມແຜນ ເມື່ອເຫັນວ່າມີຄວາມ[illegible] ຫຼື ຄຳສະເໜີຂອງຜູ້ໄດ້ຮັບຜົນກະທົບ ໂດຍໄດ້ແຈ້ງໃຫ້ຜູ້ຖືກກວດກາຮັບຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ແມ່ນການກວດກາທີ່ບໍ່ໄດ້ແຈ້ງການ[illegible] ແຈ້ງໃຫ້ຜູ້ຖືກກວດກາໄດ້ຮັບຮູ້ລ່ວງໜ້າ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 32 ນະໂຍບາຍຕໍ່ຜູ້ມີຜົນງານ

[illegible] ແມ່ນຈະໄດ້ຮັບການ[illegible]

ສແກນດ້ວຍ CamScanner

ມາດຕາ 33 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ ທີ່ໄດ້ກຳນົດໄວ້.

ມາດຕາ 34 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະແບບເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍຕ່ຳກວ່າຫ້າແສນກີບລົງມາ ຈະຕ້ອງໄດ້ຖືກຕັກເຕືອນ, ສຶກສາອົບຮົມ ແລະ ຈະໄດ້ສ້າງບົດບັນທຶກໄວ້ເປັນຫຼັກຖານ.

ມາດຕາ 35 ມາດຕະການປະຕິບັດທາງວິໄນ

ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຄວາມຜິດທາງອາຍາ ຈະຖືກຕັກເຕືອນ, ກ່າວເຕືອນຄວາມຜິດ ຫຼື ກໍລະນີບໍ່ຈິງໃຈລາຍງານ, ລົບຫຼົ່ກຈາກຄວາມຜິດຂອງຕົນ ຈະຖືກໂຈະການເລື່ອນຊັ້ນຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕຳແໜ່ງ ຍົກຍ້າຍໄປຮັບຕຳແໜ່ງໃໝ່ ທີ່ຕ່ຳກວ່າເກົ່າ ຫຼື ໃຫ້ອອກຈາກລັດຖະກອນ ແລະ ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນຂອງຕົນທີ່ໄດ້ມາໂດຍບໍ່ຖືກຕ້ອງ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

ມາດຕາ 36 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລວມເຖິງເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການ ເນື່ອງຈາກການກະທຳທີ່ບໍ່ຖືກຕ້ອງ ແມ່ນຈະຕ້ອງໄດ້ຮັບການແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

ມາດຕາ 37 ມາດຕະການທາງອາຍາ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ໃຫ້ແກ່ສິດ, ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການ ຈະຖືກດຳເນີນຄະດີຕາມຂະບວນການຍຸຕິທຳ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

ມາດຕາ 38 ການຈັດຕັ້ງປະຕິບັດ

ມອບໃຫ້ຄະນະຮັບຜິດຊອບຊີ້ນຳລວມຂັ້ນແຂວງ, ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງຂັ້ນເມືອງ, ອົງການປົກຄອງບ້ານ ແລະ ຜູ້ທີ່ໄດ້ຮັບຜົນກະທົບເປັນເຈົ້າການ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 39 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ເຈົ້າແຂວງ

ປອ. ສອນທະນຸ ທຳມະວົງ



ສແກນດ້ວຍ CamScanner